# ຫົວຂໍ້ຂອງວິດີໂອມີຫຍັງແດ່?

## ວິຊາພາສາລາວ

ການນຳໃຊ້ສື່ ແລະ ເຕັກນິກການຮຽນການສອນວິຊາພາສາລາວ ໃນການນຳໃຊ້ຫຼັກສູດສະບັບປັບປຸງໃໝ່.

> ເຕັກນິກການສອນທີ 1-3 ສຳລັບຊັ້ນປະຖົມສຶກສາປີທີ 1
> ເຕັກນິກການສອນທີ 4-5 ສຳລັບຊັ້ນປະຖົມສຶກສາປີທີ 1
> ເຕັກນິກການສອນທີ 6-7 ສຳລັບຊັ້ນປະຖົມສຶກສາປີທີ 1
> ເຕັກນິກການສອນທີ 8-9 ສຳລັບຊັ້ນປະຖົມສຶກສາປີທີ 1
> ເຕັກນິກການສອນທີ 10-12 ສຳລັບຊັ້ນປະຖົມສຶກສາປີທີ 1
> ເຕັກນິກການສອນທີ 15 ສຳລັບຊັ້ນປະຖົມສຶກສາປີທີ 1
> ການນຳໃຊ້ປຶ້ມອ່ານເສີມ ເພື່ອກຽມຄວາມພ້ອມໃຫ້ນັກຮຽນສູ່ການອ່ານດ້ວຍຕົນເອງ (ພາກ 1)
> ການນຳໃຊ້ປຶ້ມອ່ານເສີມ ເພື່ອຊຸກຍູ້ຊ່ວຍເຫຼືອການອ່ານດ້ວຍຕົນເອງ (ພາກ 2)
> ຈະມີວິດີໂອໃໝ່ເພີ່ມໃນໄວໆນີ້





## ການຄຸ້ມຄອງຫ້ອງຮຽນ

ຍຸດທະສາດ ແລະ ວິທີການຄຸ້ມຄອງນັກຮຽນ ແລະ ການຈັດກິດຈະກຳຢູ່ໃນ ແລະ ນອກຫ້ອງຮຽນ.

> ການຈັດການຮຽນການສອນຢູ່ນອກຫ້ອງຮຽນ
> ຈະມີວິດີໂອໃໝ່ເພີ່ມໃນໄວໆນີ້



## ການປະເມີນນັກຮຽນ

ເຕັກນິກ ແລະ ວິທີການປະເມີນນັກຮຽນຢ່າງມີປະສິດຕິພາບ.

> ການນຳໃຊ້ເກນການປະເມີນ
> ຈະມີວິດີໂອໃໝ່ເພີ່ມໃນໄວໆນີ້



## ຈະມີວິດີໂອ ແລະ ເພງໃໝ່ຈະມີເພີ່ມໃນປີ 2020

ຢ່າລືມຕິດຕາມ ແລະ ກົດຕິດຕາມຊ່ອງຢູທູບ
"ວິດີໂອສຳລັບການພັດທະນາຄູ **Teacher Development Videos**"

## ການພັດທະນາວິຊາຊີບຄູ

ການຮຽນແບບເພື່ອນຊ່ວຍເພື່ອນແມ່ນກິດຈະກຳເພື່ອສືບຕໍ່ການພັດທະນາວິຊາຊີບຄູ.

> ການສັງເກດການສອນ ແລະ ໃຫ້ຄຳເຫັນ
> ຈະມີວິດີໂອໃໝ່ເພີ່ມໃນໄວໆນີ້



## ການຮຽນຮ່ວມ

ກິດຈະກຳ ແລະ ວິທີການສອນ ເພື່ອຮັບປະກັນວ່ານັກຮຽນທຸກຄົນມີໂອກາດເທົ່າທຽມກັນໃນການຮຽນ ແລະ ການມີສ່ວນຮ່ວມ.

> ຈະມີວິດີໂອໃໝ່ເພີ່ມໃນໄວໆນີ້



## ການຄຸ້ມຄອງສື່ການຮຽນການສອນ

ນຳໃຊ້ ແລະ ຮັກສາສື່ການຮຽນການສອນຕ່າງໆໃນຫ້ອງຮຽນ.

> ຈະມີວິດີໂອໃໝ່ເພີ່ມໃນໄວໆນີ້



## ດົນຕີ ແລະ ເພງ

ເພງທີ່ນຳໃຊ້ໃນຫ້ອງຮຽນສຳລັບຫຼັກສູດຊັ້ນປະຖົມສຶກສາສະບັບປັບປຸງໃໝ່.

> 34 ເພງ ສຳລັບຫຼັກສູດຊັ້ນ ປ.1 ສະບັບປັບປຸງໃໝ່
> ຈະມີເພງໃໝ່ເພີ່ມໃນໄວໆນີ້




ແຜນງານບີຄວາແມ່ນແຜນງານທີ່ນຳພາໂດຍລັດຖະບານແຫ່ງ ສປປ ລາວ,
ໂດຍການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ແລະ ສະຫະພາບເອີຣົບ

> ສຳລັບຄູຊັ້ນປະຖົມສຶກສາ
> ສຳລັບຜູ້ອຳນວຍການຊັ້ນປະຖົມສຶກສາ
> ສຳລັບຄູສຶກສານິເທດ

# ວິດີໂອສຳລັບການພັດທະນາຄູ

ວິດີໂອນຳໃຊ້ໃນການຝຶກອົບຮົມ ເພື່ອສະໜັບສະໜູນການສອນໃນຫຼັກສູດຊັ້ນປະຖົມສຶກສາສະບັບປັບປຸງໃໝ່





ທ່ານສາມາດເຂົ້າເບິ່ງວິດີໂອໄດ້ໂດຍການ:

ສະແກນ ຄິວອາໂຄດ

ຫຼື

ຄົ້ນຫາ "ວິດີໂອສຳລັບການພັດທະນາຄູ **Teacher Development Videos**" ໃນຊ່ອງຢູທູບ

# ວີດີໂອສຳລັບການພັດທະນາຄູ

ການຈັດຕັ້ງປະຕິບັດຫຼັກສູດຊັ້ນປະຖົມສຶກສາສະບັບປັບປຸງໃໝ່ ໄດ້ເລີ່ມຕົ້ນໃນເດືອນກັນຍາ 2019 ໃນຊັ້ນ ປ.1 ແລະ ຈະສືບຕໍ່ດຳເນີນໄປເທື່ອລະຂັ້ນຮຽນທຸກໆປີຈົນຮອດຊັ້ນ ປ.5.

ຫຼັກສູດສະບັບປັບປຸງໃໝ່ ຈະປະກອບສ່ວນສຳຄັນເຂົ້າໃນການປັບປຸງຜົນການຮຽນສຳລັບເດັກ ແລະ ເພີ່ມທັກສະ ແລະ ຄວາມຮູ້ສຳລັບການຮຽນ ແລະ ການເຮັດວຽກໃນອະນາຄົດ.

ຄູແມ່ນຜູ້ຈັດຕັ້ງປະຕິບັດທີ່ສຳຄັນຕໍ່ກັບການປ່ຽນແປງນີ້ ເພາະເຂົາເຈົ້າແມ່ນຜູ້ນຳໃຊ້ຫຼັກສູດສະບັບປັບປຸງໃໝ່ ເພື່ອສອນເດັກນ້ອຍ ແລະ ຈັດຕັ້ງປະຕິບັດວິທີການສອນແບບໃໝ່.

ວີດີໂອສຳລັບການພັດທະນາຄູແມ່ນສ້າງຂຶ້ນເພື່ອຊ່ວຍຄູໃນການພັດທະນາທັກສະຂອງພວກເຂົາໃນການນຳໃຊ້ຫຼັກສູດສະບັບປັບປຸງໃໝ່ ຫຼັງຈາກທີ່ໄດ້ຮັບການຝຶກອົບຮົມແບບເຊິ່ງໜ້າ. ວີດີໂອແມ່ນທວນຄືນຫົວຂໍ້ສຳຄັນທີ່ໄດ້ສົນທະນາໃນລະຫວ່າງການຝຶກອົບຮົມ. ສາທິດເຕັກນິກການສອນແບບໃໝ່ ແລະ ສະແດງໃຫ້ເຫັນການຈັດຕັ້ງປະຕິບັດທີ່ມີປະສິດຕິພາບເພື່ອນຳໃຊ້ເຂົ້າໃນການແກ້ໄຂບັນຫາການສອນທີ່ທ້າທາຍ. ວີດີໂອເຫຼົ່ານີ້ແມ່ນນຳໃຊ້ຕົວຢ່າງທີ່ເກີດຂຶ້ນຕົວຈິງຈາກຄູຜູ້ທີ່ນຳໃຊ້ຫຼັກສູດຊັ້ນປະຖົມສະບັບປັບປຸງໃໝ່ໃນຫ້ອງຮຽນຕົວຈິງໃນປະເທດລາວ.




# ຈະນຳໃຊ້ວີດີໂອແນວໃດ?

## 1 ເລືອກວີດີໂອທີ່ຕ້ອງການຮັບຊົມ

**ເບິ່ງຫົວຂໍ້ວີດີໂອຕ່າງໆທີ່ມີໃນຊ່ອງຢູທູບ. ເລືອກວີດີໂອທີ່ທ່ານຄິດວ່າຈະຊ່ວຍໃນການສອນສະເພາະຂົງເຂດວິຊາທີ່ສອນ.**

ໃນການເລືອກຮັບຊົມວີດີໂອ, ທ່ານຕ້ອງຄຳນຶງວ່າ:

> ການສອນໃດທີ່ທ້າທາຍທີ່ສຸດສຳລັບທ່ານ?

> ທ່ານຢາກຮຽນຮູ້ຫຍັງເພີ່ມເຕີມຈາກວີດີໂອນີ້?

> ບັນຫາໃດທີ່ທ່ານອາດພົບພໍ້ໃນບົດຮຽນຕໍ່ໄປ?

## 2 ກຽມພ້ອມຮັບຊົມ

**ອ່ານເນື້ອໃນຂອງວີດີໂອ ແລະ ກະກຽມສື່ການຮຽນການສອນທີ່ກ່ຽວຂ້ອງທີ່ທ່ານອາດຕ້ອງການ ເຊັ່ນວ່າ ປຶ້ມຄູ່ມືຄູ, ປຶ້ມແບບຮຽນ, ສື່ການສອນ, ປຶ້ມບັນທຶກ.**

ສິ່ງທີ່ຄວນຄຳນຶງ ກ່ອນຮັບຊົມວີດີໂອ:

> ທ່ານຮູ້ຫຍັງແດ່ແລ້ວ ກ່ຽວກັບຫົວຂໍ້ນີ້?

> ທ່ານຢາກຮຽນຮູ້ຫຍັງ?

## 3 ຮັບຊົມວີດີໂອ

**ຮັບຊົມວີດີໂອດ້ວຍຕົນເອງ ຫຼື ກັບຄູ, ຜູ້ອຳນວຍການ ຫຼື ຄູສຶກສານິເທດທ່ານອື່ນໆ. ຢຸດການຮັບຊົມ, ຍ້ອນຄືນເບິ່ງວີດີໂອ ແລະ ຫຼິ້ນວີດີໂອຄືນຫຼາຍໆຄັ້ງຕາມຕ້ອງການ.**

ໃນຂະນະທີ່ເບິ່ງວີດີໂອ ໃຫ້ສັງເກດ ແລະ ບັນທຶກສິ່ງຕໍ່ໄປນີ້:

> ຈຸດສຳຄັນຫຍັງແດ່ທີ່ຄູໄດ້ເຮັດໃນວີດີໂອ?

> ນັກຮຽນມີການຕອບຄືນແນວໃດ? (ຖ້າມີ)

## 4 ການສະທ້ອນຄືນຕໍ່ກັບວີດີໂອ

**ໃຊ້ເວລາໜ້ອຍໜຶ່ງເພື່ອທົບທວນຄືນສິ່ງທີ່ເກີດຂຶ້ນໃນວີດີໂອ ໂດຍອີງໃສ່ສິ່ງທີ່ທ່ານບັນທຶກ.**

ເພື່ອເປັນແນວທາງໃຫ້ທ່ານສະທ້ອນຄືນສິ່ງທີ່ເກີດຂຶ້ນໃນວີດີໂອ, ໃຫ້ຄຳນຶງສິ່ງຕໍ່ໄປນີ້:

> ໃນວີດີໂອສິ່ງໃດທີ່ຄູເຮັດແຕກຕ່າງກັບສິ່ງທີ່ທ່ານເຮັດ?

> ທ່ານຈະນຳໃຊ້ເຕັກນິກການສອນ/ ວິທີການ ການເຮັດກິດຈະກຳໃນຫ້ອງຮຽນຂອງຕົນແນວໃດ?

## 5 ນຳໃຊ້ສິ່ງທີ່ໄດ້ຮຽນ

**ຈັດສັນເວລາ ແລະ/ ຫຼື ບົດຮຽນ ເພື່ອທົດລອງນຳໃຊ້ເຕັກນິກ/ ວິທີການ/ ການເຮັດກິດຈະກຳ.**

ຄຳນຶງກ່ຽວກັບຄຳຖາມລຸ່ມນີ້:

> ເມື່ອໃດທ່ານຈະລອງນຳໃຊ້ເຕັກນິກ/ ວິທີການ/ ການເຮັດກິດຈະກຳ?

> ທ່ານຢາກໃຫ້ຄູສຶກສານິເທດ/ ຜູ້ອຳນວຍການ ຫຼື ຄູສອນທ່ານອື່ນສັງເກດການສອນຂອງທ່ານບໍ່?



## 6 ການສະທ້ອນຄືນການສອນ

**ພາຍຫຼັງທ່ານໄດ້ທົດລອງນຳໃຊ້ເຕັກນິກການສອນ/ ວິທີການ/ ການເຮັດກິດຈະກຳ ໃຫ້ທ່ານສະທ້ອນຄືນໃນສິ່ງທີ່ທ່ານໄດ້ສອນ. ເບິ່ງວີດີໂອຄືນຖ້າຕ້ອງການ ແລະ ທົດລອງຫຼາຍໆຄັ້ງຈົນກວ່າທ່ານມີຄວາມຊຳນານໃນເຕັກນິກ/ ວິທີການ/ ການເຮັດກິດຈະກຳ**

ບາງຈຸດທີ່ທ່ານອາດສະທ້ອນຄືນ:

> ສິ່ງໃດທີ່ທ່ານເຮັດໄດ້ດີ?

> ທ່ານໄດ້ສອນຫຍັງທີ່ແຕກຕ່າງຈາກການສາທິດໃນວີດີໂອບໍ່?

> ທ່ານສາມາດສອນຫຍັງທີ່ແຕກຕ່າງເພື່ອປັບປຸງການສອນຂອງທ່ານໃນຄັ້ງຕໍ່ໄປ?

